ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງ ນານ
ຫ້ອງການກະສິກຳ ແລະ ປ່າໄມ້
ໂຄງການ ຊກຂ

ເລກທີ:..48../ຊກຂ
ເມືອງນານ, ວັນທີ: 15/ 03 / 2023

## ແຈ້ງການ

**ເຖິງ:** ບັນດາຫົວໜ່ວຍທຸລະກິດກະສິກຳ, ບໍລິສັດສົ່ງເສີມການຜະລິດກະສິກຳເປັນສິນຄ້າ, ຜູ້ສະໜອງປັດໄຈການຜະລິດກະສິກຳໃນຂອບເຂດເມືອງນານ ແຂວງຫລວງພະບາງ

**ເລື່ອງ:** ການສະໝັກຍື່ນຄຳຮ້ອງ ເພື່ອຂໍທຶນສົມທົບສຳລັບພັດທະນາທຸລະກິດກະສິກຳ ຈາກໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ (ຊກຂ) PICSA-IFAD ປະຈຳເມືອງນານ

- ອີງໃສ່: ສັນຍາເງິນກູ້ຢືມຈາກກອງທຶນ ສາກົນ ເພື່ອການພັດທະນາກະສິກຳ **IFAD** ເລກທີ: 2000003089.
- ອີງໃສ່: ເລກທີ 034 ກະຊວງການເງິນວ່າດ້ວຍການຈັດຊື້-ຈັດຈ້າງ ໃຫ້ຖືກຕ້ອງຕາມລະບຽບຫຼັກການ.
- ອີງໃສ່: ແຜນດຳເນີນງານໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ ປະຈຳປີ 2022.

ໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ (ຊກຂ) PICSA-IFAD ປະຈຳເມືອງນານ ເປັນໂຄງການສົ່ງເສີມການຜະລິດກະສິກຳ ຂອງຄົວເຮືອນຂະໜາດນ້ອຍ ເພື່ອເປັນສິນຄ້າໂດຍມີການເຊື່ອມໂຍງກັບຕະຫຼາດ. ໂຄງການດັ່ງກ່າວມີຈຸດປະສົງເພື່ອປະກອບສ່ວນເຂົ້າໃນການປັບປຸງຊີວິດການເປັນຢູ່ໂດຍເລີ່ມຈາກການຜະລິດເພື່ອຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການໄປສູ່ການຜະລິດເປັນສິນຄ້າ. ກອງທຶນສົມທົບ ສຳລັບ ພັດທະນາທຸລະກິດກະສິກຳ ແມ່ນເປັນໜຶ່ງໃນບັນດາກົນໄກການຈັດຕັ້ງປະຕິບັດໂຄງການ ທີ່ມີເປົ້າໝາຍເພື່ອເຮັດໃຫ້ຕ່ອງໂສ້ມູນຄ່າຂອງກິດຈະກຳທີ່ໂຄງການສະໜັບສະໜູນໄດ້ເຂົ້າເຖິງຕະຫຼາດ ໂດຍຜ່ານການຊ່ວຍເຫຼືອດ້ານວິຊາການ ແລະ ການເງິນໃຫ້ແກ່ຫົວໜ່ວຍທຸລະກິດກະສິກຳທີ່ຕິດພັນກັບກຸ່ມກະສິກອນ ແລະ ຊຸມຊົນເປົ້າໝາຍຂອງໂຄງການ ເພື່ອຮັບປະກັນການເຂົ້າເຖິງຕະຫຼາດ, ການມີຕະຫຼາດຮອງຮັບທີ່ດີກວ່າເກົ່າ ແລະ ປັບປຸງການເຂົ້າເຖິງບໍລິການຂອງພາກທຸລະກິດ.

ເພື່ອເປັນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງນານ ໃນນາມເປັນຈຸດໃຈກາງໃນການປະສານງານຂອງໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ ຂໍຖືເປັນກຽດແຈ້ງ

Scanned with CamSca

ມາຍັງບັນດາຫົວໜ່ວຍທຸລະກິດກະສິກຳ ທີ່ມີການສົ່ງເສີມການຜະລິດເປັນສິນຄ້າຊາບວ່າ ປັດຈຸບັນທາງໂຄງການໄດ້ມີການສະໜອງທຶນສົມທົບເພື່ອພັດທະນາທຸລະກິດກະສິກຳ.

- ສຳລັບຂັ້ນເມືອງປ່ອຍທຶນສົມທົບຫົວໜ່ວຍທຸລະກິດກະສິກຳຂະໜາດກາງ ເມືອງລະ 02-03 ຫົວໜ່ວຍຕໍ່ເມືອງ.

**# ເງື່ອນໄຂຫົວໜ່ວຍທຸລະກິດກະສິກຳມີດັ່ງນີ້:**

- ມີຄວາມສົນໃຈຢາກເຮັດວຽກຮ່ວມກັບໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ (ຊກຂ) PICSA-IFAD .
- ຫົວໜ່ວຍທຸລະກິດ ມີການຈົດທະບຽນທີ່ຖືກຕ້ອງຕາມກົດໝາຍ.
- ຫົວໜ່ວຍທຸລະກິດ ມີໃບແຈ້ງເສຍອາກອນ ແລະ ໃບຢັ້ງຢືນການເສຍອາກອນ.
- ຫົວໜ່ວຍທຸລະກິດ ມີການດຳເນີນກິດຈະການຫຼາຍກວ່າ 02 ປີຂຶ້ນໄປ.
- ຫົວໜ່ວຍທຸລະກິດ ມີຄວາມສາມາດ, ປະສົບການໃນການສົ່ງເສີມທຸລະກິດກະສິກຳ ແລະ ການເຊື່ອມໂຍງກະສິກອນສູ່ຕະຫຼາດ (ການເຊັນສັນຍາເກັບຊື້ຜົນຜະລິດກັບກຸ່ມຜະລິດທີ່ໂຄງການໄດ້ໃຫ້ການສະໜັບສະໜູນສ້າງຕັ້ງຂຶ້ນ).

ໄລຍະເວລາການປະກາດ 14 ວັນ, ເລີ່ມແຕ່ວັນທີ 15 / 03 / 2023 ຫາ 29 / 03 /2023

ສະນັ້ນ, ຫ້ອງການກະສິກຳ ແລະ ປ່າໄມ້ ຈຶ່ງອອກແຈ້ງການສະບັບນີ້ເຖິງບັນດາຫົວໜ່ວຍທຸລະກິດກະສິກຳ, ບໍລິສັດສົ່ງເສີມການຜະລິດກະສິກຳເປັນສິນຄ້າ, ຜູ້ສະໜອງປັດໄຈການຜະລິດກະສິກຳ ຜູ້ທີ່ມີຄວາມສົນໃຈເພື່ອສະໝັກຂໍທຶນສົມທົບນຳໂຄງຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ (ຊກຂ) PICSA-IFA ສາມາດພົວພັນ ແລະ ຂໍຂໍ້ມູນລາຍລະອຽດ ກ່ຽວກັບ ຂັ້ນຕອນ ແລະ ເງື່ອນໄຂການສະໝັກຂໍທຶນໄດ້ ທີ່ຫ້ອງການປະສານງານໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍເມືອງນານ ໃນວັນ ແລະ ເວລາລັດຖະການ.

**ຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້**
**(ຜູ້ປະສານງານໂຄງການ ຊກຂ ເມືອງນານ)**

ຫ້ອງການ ກະສິກຳ ແລະ ປ່າໄມ້ ເມືອງນານ

ຄຳໂກ້ ສີອຳພອນ

ຜູ້ປະສານງານໂຄງການ ຊກຂ ເມືອງນານ
ເບີໂທຕິດຕໍ່: 020 55700714

Scanned with CamScanner